ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ລັດວິສາຫະກິດໄຟຟ້າລາວ
ຝ່າຍແຜນການ-ການເງິນ
ພະແນກຈັດຊື້

ເລກທີ.331..ຟຟລ/ຝຜກ-ກງ.ພຈຊ.

ນະຄອນຫຼວງວຽງຈັນ, ວັນທີ:........22 MAR 2022

## ໜັງສືສະເໜີ

ຮຽນ : ທ່ານ ຫົວໜ້າຫ້ອງການຜູ້ອຳນວຍການ.

ເລື່ອງ : ຂໍປະກາດລົງໜັງສືພິມ ຈັດການປະມູນເປີດກ້ວາງພາຍໃນ ວຽກດັດແປງ-ປັບປຸງ ພາຫະນະແກ້ໄຂ ໄຟຟ້າຂັດຂ້ອງສຸກເສີນ.

- ອີງຕາມ: ໜັງສືຂໍອະນຸມັດດຳເນີນການປະມູນ ສະບັບເລກທີ:245/ຟຟລ.ຝຜກ-ກງ.ພຈຊ, ລົງວັນທີ:01/03/2022.
- ອີງຕາມ: ໜັງສືເຊີນຮ່ວມປະມູນ ສະບັບເລກທີ:1094/ຟຟລ.ຝຜກ-ກງ, ລົງວັນທີ:04/03/2022.

ພະແນກຈັດຊື້, ຝ່າຍແຜນການ-ການເງິນ ຂໍຮຽນສະເໜີມາຍັງທ່ານເພື່ອ ຂໍລົງໜັງສືພິມຈັດການປະມູນເປີດກ້ວາງພາຍໃນ ວຽກງານດັດແປງ-ປັບປຸງ ພາຫະນະແກ້ໄຂ ໄຟຟ້າຂັດຂ້ອງສຸກເສີນ, ໂດຍໃຫ້ລົງ ໜັງສືພິມປະຊາຊົນ, ປະເທດລາວ,ວຽງຈັນໃໝ່ ພ້ອມກັບສາຍລົງໜ້າຈໍໂທລະທັດ ຟຟລ ແລະ ເວັບໄຊຂອງ ຟຟລ www.edl.com.la. ເລີ່ມແຕ່ວັນທີ: 16/05/2022 ຫາ 06/06/2022.

ໝາຍເຫດ:

- ປະຊາຊົນ ໃຫ້ລົງອາທິດລະ 2 ຄັ້ງ.
- ປະເທດລາວ ໃຫ້ລົງອາທິດລະ 2 ຄັ້ງ.
- ວຽງຈັນໃໝ່ ໃຫ້ລົງອາທິດລະ 2 ຄັ້ງ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເພື່ອພິຈາລະນາຕາມຄວາມເໝາະສົມດ້ວຍ.

ຮຽນມາດ້ວຍຄວາມນັບຖື,

ຫົວໜ້າຝ່າຍແຜນການ-ການເງິນ

ສະກົດ ລັດທິດາ

ຫົວໜ້າພະແນກຈັດຊື້

ປອ. ແສງອາພອນ ພະນາວັນ

ຖະໜົນມິດຕະພາບລາວໄທ, ຕູ້ ປ.ນ 309, ທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປ ລາວ.
ໂທ: (85621) ; 316094-1614 ແຟັກ: (856-21) 316118; 263794; ອີເມລ: edlmdo@edl.com.la; ເວັບໄຊ: www.edlcom.la

สแกนด้วย CamScanner

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງພະລັງງານແລະບໍ່ແຮ່**

**ລັດວິສາຫະກິດໄຟຟ້າລາວ**

**ເລກທີ:1094/ຟຟລ.ຝຜກ-ກງ**

**ນະຄອນຫຼວງວຽງຈັນ, ວັນທີ:** 04 MAR 2022

# ໜັງສືເຊີນເຂົ້າຮ່ວມການປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ຮັບອະນຸມັດງົບປະມານປະຈຳສົກປີ 2022 ເພື່ອດຳເນີນການປະມູນເປີດກ້ວາງພາຍໃນ ວຽກງານດັດແປງ - ປັບປຸງ ພາຫະນະແກ້ໄຂໄຟຟ້າຂັດຂ້ອງສຸກເສີນໄລຍະເວລາ 06 ເດືອນ.
2. ບໍລິສັດໃດມີຄວາມສົນໃຈຕ້ອງການຊື້ເອກະສານປະມູນຕ້ອງໄດ້ເຮັດໜັງສືເຈດຈຳນົງເຂົ້າມາພົວພັນທີ່ ພະແນກຈັດຊື້, ຝ່າຍແຜນການ - ການເງິນ (ຊັ້ນ 06) ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ໂທ: (856-21) 316094-1614) ໃນໂມງລັດຖະການ ເລີ່ມແຕ່ວັນທີ ໑໖/.໕./2022 ເປັນຕົ້ນໄປ, ໃນລາຄາ 500,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງເປັນເງິນສົດ).
3. ການປະມູນ ດັດແປງ - ປັບປຸງຈະແບ່ງອອກເປັນ 02 ສ່ວນຄື: ຍີ່ຫໍ້ Hyundai Porter H-100 ແລະ ຍີ່ຫໍ້ Isuzu D-MAX ໄລຍະເວລາການປະຕິບັດ 06 ເດືອນ.
4. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 30/ສພຊ, ລົງວັນທີ 02 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 0477/ກງ, ລົງວັນທີ 13ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ 24 ມິຖຸນາ 2019.
5. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ໃບມອບພັນທະອາກອນປີ 2020 ທີ່ນຳໃຊ້ໄດ້ເຖິງວັນທີ 31/12/2021 ແລະ ຖືກຕ້ອງຕາມກົດໝາຍ.
6. ການບໍລິການຂອງຜູ້ປະມູນຕ້ອງຖືກຕ້ອງຕາມມາດຕະຖານທີ່ ຟຟລ ໄດ້ກຳນົດໄວ້.
7. ຊອງປະມູນຈະຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ:.໒./.໖./2022, ທີ່ຫ້ອງປະຊຸມຊັ້ນ .໘. ຫ້ອງ ..801 ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າກ່ອນເວລາກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.
8. ຜູ້ປະມູນຕ້ອງມີເງິນຄ້ຳປະກັນຊອງປະມູນ: 2% ຂອງມູນຄ່າທີ່ສະເໜີໃນການປະມູນ (ເປັນໜັງສືຄ້ຳປະກັນຈາກທະ ນາຄານ, ແຊັກວິຊ່າ ຫຼື ເງິນສົດ ທີ່ນຳໃຊ້ເຖິງ ວັນທີ:..໖../.໙../2021).

**ຜູ້ອຳນວຍການໃຫຍ່**

ລັດວິສາຫະກິດ ໄຟຟ້າລາວ EDL

ຟອງປະສິດ ເພັດສີສຸກ

ຮອງຜູ້ອຳນວຍການໃຫຍ່

สแกนด้วย CamScanner